ທະນາຄານຮ່ວມພັດທະນາ ມະຫາຊົນ

ເລກທີ 115 /ທຄຮ
ນະຄອນຫຼວງວຽງຈັນ, ວັນທີ 30 ກໍລະກົດ 2026

ບົດບັນທຶກ
ກອງປະຊຸມວິສາມັນຜູ້ຖືຮຸ້ນ
ທະນາຄານຮ່ວມພັດທະນາ ມະຫາຊົນ ຄັ້ງທີ I ປະຈຳປີ 2026

ກອງປະຊຸມວິສາມັນຜູ້ຖືຮຸ້ນຂອງທະນາຄານຮ່ວມພັດທະນາ ມະຫາຊົນ (ທຄຮ) ຄັ້ງທີ I ປະຈຳປີ 2026 ເຊິ່ງຕໍ່ໄປນີ້ເອີ້ນວ່າ "ກອງປະຊຸມ" ໄດ້ຈັດຂຶ້ນໃນເວລາ 14:00 ໂມງ ຂອງວັນສຸກ, ວັນທີ 17 ກໍລະກົດ 2026 ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 6, ທະນາຄານຮ່ວມພັດທະນາ ມະຫາຊົນ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານກອງປະຊຸມຂອງ ທ່ານ ຄຳສິງ ສອນສິນມະວິງ, ສະມາຊິກສະພາບໍລິຫານ ທຄຮ (ທີ່ຖືກມອບສິດຈາກ ທ່ານ ວິໄລ ສີພະພອນ, ປະທານສະພາບໍລິຫານ) ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຮ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ: 54 ທ່ານ, ຜູ້ມອບສິດຈຳນວນ: 2 ທ່ານ, ລວມຈຳນວນຮຸ້ນ ທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 677,924,900 ຮຸ້ນ, ນັບທັງຈຳນວນຮຸ້ນທີ່ຖືກມອບສິດ 40,479,966 ຮຸ້ນ, ບັນລຸອັດຕາສ່ວນ 90.39% ຂອງຈຳນວນຮຸ້ນ ທຄຮ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຮ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 72,075,100 ຮຸ້ນ ເທົ່າກັບ 9.61 % ຂອງຈຳນວນຮຸ້ນ ທຄຮ ທັງໝົດ.

ຄະນະປະທານ ກອງປະຊຸມ ປະກອບມີ:

1. ທ່ານ ວິໄລ ສີພະພອນ — ປະທານສະພາບໍລິຫານ;
2. ທ່ານ ນາງ ພອນສະໄໝ ສຸຂະຜົນ — ຮອງປະທານສະພາບໍລິຫານ;
3. ທ່ານ ຄຳສິງ ສອນສິນມະວິງ — ສະມາຊິກສະພາບໍລິຫານ; ເຮັດໜ້າທີ່ເປັນປະທານກອງປະຊຸມ;
4. ທ່ານ ສາຄອນ ຍໍພັນໄຊ — ຜູ້ອຳນວຍການ ທຄຮ, ສະມາຊິກສະພາບໍລິຫານ;
5. ທ່ານ ວິລັນເດດ ໄວຍະສິມສັກ — ສະມາຊິກສະພາບໍລິຫານ;
6. ທ່ານ ວິສຸດ ບົວສີສະອາດ — ສະມາຊິກສະພາບໍລິຫານ;
7. ທ່ານ ບຸນຊຸ່ມ ສີສະຫວັດ — ສະມາຊິກສະພາບໍລິຫານ ອິດສະຫຼະ;
8. ທ່ານ ສຸກສະຫວັນ ມະນີວັນ — ສະມາຊິກສະພາບໍລິຫານ ອິດສະຫຼະ;
9. ທ່ານ ປອ. ຈອມຄຳ ບຸບຜາລີວັນ — ສະມາຊິກສະພາບໍລິຫານ ອິດສະຫຼະ.

ປະທານກອງປະຊຸມ ໄດ້ແນະນຳລະບຽບການດຳເນີນກອງປະຊຸມ ແລະ ວິທີລົງຄະແນນສຽງ, ຈາກນັ້ນກອງປະຊຸມຈຶ່ງໄດ້ດຳເນີນແຕ່ລະວາລະ.

ກອງປະຊຸມ ໄດ້ພິຈາລະນາ, ມີຄຳເຫັນ ແລະ ມີການຕົກລົງໃນແຕ່ລະວາລະ ດັ່ງນີ້:

ມາດຕາ 1: ຮັບຮອງເອົາບົດບັນທຶກກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2025.

ທ່ານ ຄຳສິງ ສອນສິນມະວິງ, ສະມາຊິກສະພາບໍລິຫານ ທຄຮ ໄດ້ລາຍງານ ໃຫ້ກອງປະຊຸມຮັບຊາບ ກ່ຽວກັບບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ສະໄໝສາມັນ ປະຈຳປີ 2025 ຈັດຂຶ້ນໃນວັນທີ 29 ເມສາ 2026 ເຊິ່ງບົດ

ເລກທີ 82 ຖະໜົນ ລ້ານຊ້າງ ບ້ານຫັດສະດີ ເມືອງຈັນທະບຸລີ ນະຄອນຫຼວງວຽງຈັນ, 01000, ສປປ ລາວ ໂທ.(+856-21) 213531-6
ສາຍດ່ວນ: 1499, WEBSITE:WWW.JDBBANK.COM.LA; EMAIL:INFO@JDBBANK.COM.LA

ບັນທຶກດັ່ງກ່າວ ໄດ້ຖືກເປີດເຜີຍສອດຄ່ອງຕາມລະບຽບທີ່ກ່ຽວຂ້ອງແລ້ວ, ສະເໜີກອງປະຊຸມ ພິຈາລະນາ ຮັບຮອງເອົາບົດບັນທຶກກອງປະຊຸມ ດັ່ງກ່າວ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມ ໃນອາລະນີ້.
ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 677,924,900 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ພິຈາລະນາ ແລະ ຮັບຮອງ ການປັບປຸງ ສະມາຊິກສະພາບໍລິຫານ ຊຸດໃໝ່.

ທ່ານ ຄຳສິງ ສອນສິນມະວົງ, ສະມາຊິກສະພາບໍລິຫານ ທຄຮ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງ ການປັບປຸງ ສະມາຊິກສະພາບໍລິຫານ ຊຸດໃໝ່, ເຊິ່ງປະກອບມີ:

1) ທ່ານ ສຸນທອນ ຈັນທະວົງ	ປະທານ ສະພາບໍລິຫານ;
2) ທ່ານ ຄຳສິງ ສອນສິນມະວົງ	ຮອງປະທານສະພາບໍລິຫານ;
3) ທ່ານ ຈັນທະພອນ ຈັນທະວົງ	ສະມາຊິກ ສະພາບໍລິຫານ;
4) ທ່ານ ນາງ ຄອນສະຫວັນ ວິຊາເທບ	ສະມາຊິກ ສະພາບໍລິຫານ;
5) ທ່ານ ບຸນຊຸ່ມ ສີສະຫວັດ	ສະມາຊິກ ອິດສະຫຼະ (ສະມາຊິກເດີມ);
6) ທ່ານ ປ.ອ ຈອມຄຳ ບຸບຜາລີວັນ	ສະມາຊິກ ອິດສະຫຼະ (ສະມາຊິກເດີມ);
7) ທ່ານ ສຸກສະຫວັນ ມະນີວັນ	ສະມາຊິກ ອິດສະຫຼະ (ສະມາຊິກເດີມ).

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມ ໃນອາລະນີ້.
ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 677,924,900 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 3 ພິຈາລະນາ ແລະ ຮັບຮອງເອົາ ການສິ້ນສຸດໜ້າທີ່ ຂອງສະມາຊິກສະພາຜູ້ບໍລິຫານ ແລະ ຄະນະອຳນວຍການ ຊຸດເກົ່າ.

ທ່ານ ຄຳສິງ ສອນສິນມະວົງ, ສະມາຊິກສະພາບໍລິຫານ ທຄຮ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງ ການສິ້ນສຸດໜ້າທີ່ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ ຊຸດເກົ່າ, ເຊິ່ງປະກອບມີ:

1) ທ່ານ ວິໄລ ສີພະພອນ, ຕຳແໜ່ງ ປະທານສະພາບໍລິຫານ ຮັບອຸດໜູນບຳເນັດ;
2) ທ່ານ ນາງ ພອນສະໄຫມ ສຸຂະຜົນ, ຕຳແໜ່ງ ຮອງປະທານສະພາບໍລິຫານ ຮັບອຸດໜູນບຳເນັດ;
3) ທ່ານ ສາຄອນ ຍໍພັນໄຊ, ຕຳແໜ່ງ ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການ ຄົບອາລະຕາມລະບຽບການ;
4) ທ່ານ ວິລັນເດດ ໄວຍະສົມສັກ, ຕຳແໜ່ງ ສະມາຊິກສະພາບໍລິຫານ ແລະ ຮອງຜູ້ອຳນວຍການ ໄດ້ຂໍລາອອກດ້ວຍຄວາມສະໝັກໃຈ;
5) ທ່ານ ວິສຸດ ບົວສີສະອາດ, ຕຳແໜ່ງ ສະມາຊິກສະພາບໍລິຫານ ສັບຊ້ອນໄປຮັບໜ້າທີ່ໃໝ່;
6) ທ່ານ ຈັນຊະນະ ສີງຫາວົງ, ຕຳແໜ່ງ ຮອງຜູ້ອຳນວຍການ ໄດ້ຂໍລາອອກດ້ວຍຄວາມສະໝັກໃຈ;
7) ທ່ານ ວິລະພົງ ພິຈິດ, ຕຳແໜ່ງ ຮອງຜູ້ອຳນວຍການ ໄດ້ຂໍລາອອກດ້ວຍຄວາມສະໝັກໃຈ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມ ໃນວາລະນີ້.
ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 677,924,900 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 4 ພິຈາລະນາ ແລະ ຮັບຮອງເອົາ ການປັບປຸງ ຄະນະອຳນວຍການ ຊຸດໃໝ່.

ທ່ານ ຄຳສິງ ສອນສິນມະວົງ, ສະມາຊິກສະພາບໍລິຫານ ທຄຮ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງ ການປັບປຸງ ຄະນະອຳນວຍການ ຊຸດໃໝ່, ເຊິ່ງປະກອບມີ:

1) ທ່ານ ນາງ ຄອນສະຫວັນ ວິຊາເທບ	ຜູ້ອຳນວຍການ;
2) ທ່ານ ນາງ ນິດຕາ ນາມມະວົງ	ຮອງຜູ້ອຳນວຍການ (ຄະນະເດີມ);
3) ທ່ານ ໄຊ ບຸລິນມະວົງ	ຮອງຜູ້ອຳນວຍການ (ຄະນະເດີມ);
4) ທ່ານ ສັງມາ ສິດທຳມະວົງ	ຮອງຜູ້ອຳນວຍການ;
5) ທ່ານ ຫຼ້າສອນໄຊ ຈັນທະວົງ	ຮອງຜູ້ອຳນວຍການ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມ ໃນວາລະນີ້.
ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 677,924,900 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 5 ພິຈາລະນາ ແລະ ຮັບຮອງເອົາ ການດັດແກ້ໃບທະບຽນວິສາຫະກິດ ແລະ ກິດລະບຽບພາຍໃນຂອງ ທຄຮ ຄື:

1) ມາດຕາ 9: ທຶນຈົດທະບຽນ
   ທຶນຈົດທະບຽນ ປັບມາເປັນ 1,125,000,000,000 ກີບ.
2) ມາດຕາ 11: ຮຸ້ນ
   ຈຳນວນຮຸ້ນ ປັບມາເປັນ 1,125,000,000 ຮຸ້ນ.
3) ມາດຕາ 14: ໂຄງປະກອບຂອງຜູ້ຖືຮຸ້ນ

ລ/ດ	ຜູ້ຖືຮຸ້ນ	ຈຳນວນຮຸ້ນ	ມູນຄ່າຮຸ້ນ (ກີບ)	ອັດຕາສ່ວນ
1	ບໍລິສັດ ເອັດເອັມຈີ ກຣຸບ ຈຳກັດຜູ້ດຽວ	951,279,202	951,279,202,000	84.558%
2	ທ່ານ ນາງ ກັນຍາ ພິຈິດ	45,539,962	45,539,962,000	4.047%
3	ທ່ານ ພຸໄຊຊະນະ ໄຊສົມບັດ	15,179,986	15,179,986,000	1.349%
4	ຜູ້ຖືຮຸ້ນທີ່ຊື້ຮຸ້ນຜ່ານຕະຫຼາດຫຼັກຊັບລາວ	113,000,850	113,000,850,000	10.044%
ລວມ		**1,125,000,000**	**1,125,000,000,000**	**100%**

4) ມາດຕາ 84: ຜົນສັກສິດ.
   ປ່ຽນແທນ ກິດລະບຽບຂອງທະນາຄານຮ່ວມພັດທະນາ ມະຫາຊົນ ສະບັບເລກທີ 064/ທຄຮ, ລົງວັນທີ 05 ມີນາ 2026.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມ ໃນວາລະນີ້.
ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 677,924,900 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກກອງປະຊຸມໄດ້ດຳເນີນຄົບຖ້ວນທຸກຂະບວນການແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ເຂົ້າຮ່ວມກອງປະຊຸມ ມີຄຳເຫັນ ຫຼື ຄຳຖາມເພີ່ມເຕີມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມ.

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ແລະ ໄດ້ປະກາດປິດກອງປະຊຸມ ໃນເວລາ 15:30 ໂມງ ຂອງວັນດຽວກັນ.

ປະທານກອງປະຊຸມ	**ຜູ້ທັນທຶກ**
ທ່ານ ຄຳສິງ ສອນສິນມະວິງ	ທ່ານ ດີອຍ ໝາວຕູ້